ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

------------------------

ສຳນັກງານນາຍົກລັດຖະມົນຕີ ເລກທີ 188 /ນຍ

ນະຄອນຫລວງວຽງຈັນ, ວັນທີ 03.07.2007.

# ດຳລັດ
## ວ່າດ້ວຍການປັບໃໝ ແລະມາດຕະການຕ່າງໆ ຕໍ່ຜູ້ລະເມີດລະບຽບກົດໝາຍກ່ຽວກັບການຈະລາຈອນທາງບົກ, ການຂົນສົ່ງທາງບົກ ແລະ ການປົກປັກຮັກສາທາງຫລວງ

- ອີງຕາມກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 27/ສພຊ, ລົງວັນທີ 6 ພຶດສະພາ 2003;
- ອີງຕາມກົດໝາຍວ່າດ້ວຍການຂົນສົ່ງທາງບົກ ສະບັບເລກທີ 03/97/ສພຊ, ລົງວັນທີ 12 ເມສາ 1997;
- ອີງຕາມກົດໝາຍວ່າດ້ວຍທາງຫລວງ ສະບັບເລກທີ 04/99/ສພຊ, ລົງວັນທີ 3 ເມສາ 1999;
- ອີງຕາມກົດໝາຍວ່າດ້ວຍການຈະລາຈອນທາງບົກ ສະບັບເລກທີ 02/ສພຊ, ລົງວັນທີ 8 ເມສາ 2000;
- ອີງຕາມການສະເໜີຂອງລັດຖະມົນຕີວ່າການກະຊວງຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ສະບັບເລກທີ 3036/ຄຂປກ, ລົງວັນທີ 03 ເມສາ 2007.

## ນາຍົກລັດຖະມົນຕີ ອອກດຳລັດ :

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ດຳລັດສະບັບນີ້ ກຳນົດອັດຕາປັບໃໝ ແລະມາດຕະການຕ່າງໆ ຕໍ່ຜູ້ລະເມີດລະບຽບກົດໝາຍກ່ຽວກັບການຈະລາຈອນທາງບົກ, ການຂົນສົ່ງທາງບົກ ແລະການປົກປັກຮັກສາທາງຫລວງ ເພື່ອເປັນບ່ອນອີງໃຫ້ແກ່ເຈົ້າໜ້າທີ່ຄວບຄຸມການຈະລາຈອນໃນການປັບໃໝ ແລະປະຕິບັດມາດຕະການຕ່າງໆຕໍ່ຜູ້ລະເມີດລະບຽບກົດໝາຍດັ່ງກ່າວ ຢ່າງເໝາະສົມ ແລະເຂັ້ມງວດ, ແນໃສ່ເຮັດໃຫ້ຜູ້ຂັບຂີ່ລົດທຸກປະເພດ ກໍຄືຜູ້

ໃຊ້ຖະໜົນທຸກຄົນ ມີສະຕິຕື່ນຕົວເຄົາລົບລະບຽບກົດໝາຍ; ເຮັດໃຫ້ການຈະລາຈອນທາງບົກ ມີຄວາມເປັນລະບຽບຮຽບຮ້ອຍ, ມີຄວາມສະດວກ, ມີຄວາມປອດໄພ ແລະເປັນເອກະພາບໃນຂອບເຂດທົ່ວປະເທດ ແລະເພື່ອປົກປັກຮັກສາຊັບສິນສ່ວນລວມຂອງຊາດ ກໍຄືຂອງປະຊາຊົນບັນດາເຜົ່າ.

**ມາດຕາ 2. ຂອບເຂດການນຳໃຊ້ດຳລັດສະບັບນີ້**

ດຳລັດສະບັບນີ້ ມີຜົນບັງຄັບໃຊ້ໃນທົ່ວດິນແດນແຫ່ງ ສປປ ລາວ ແລະນຳໃຊ້ກັບຜູ້ຂັບຂີ່ລົດທຸກປະເພດ, ຜູ້ນຳໃຊ້ຖະໜົນ, ຜູ້ປົກຄອງເດັກ, ຜູ້ປະກອບກິດຈະການຕ່າງໆ, ເຈົ້າຂອງອາຄານສະຖານທີ່ຢູ່ຕາມແຄມທາງ ແລະເຈົ້າຂອງສັດລ້ຽງ ທີ່ເປັນພົນລະເມືອງລາວ, ຄົນຕ່າງດ້າວ, ຄົນຕ່າງປະເທດ ແລະຄົນບໍ່ມີສັນຊາດທີ່ເຄື່ອນໄຫວ ແລະດຳລົງຊີວິດຢູ່ໃນສປປ ລາວ ຊຶ່ງລະເມີດລະບຽບກົດໝາຍກ່ຽວກັບການຈະລາຈອນທາງບົກ, ການຂົນສົ່ງທາງບົກ ແລະການປົກປັກຮັກສາທາງຫລວງ.

## ໝວດທີ 2
## ອັດຕາປັບໃໝ ສຳລັບການລະເມີດລະບຽບການຂັບຂີ່ ແລະການສັນຈອນ

**ມາດຕາ 3. ການຂັບຂີ່ລົດໂດຍຜູ້ທີ່ບໍ່ເຖິງອາຍຸກະສຽນຂັບຂີ່**

ຫ້າມຜູ້ທີ່ມີອາຍຸຕໍ່າກວ່າ 15 ປີ ຂັບຂີ່ລົດຈັກ ຕາມເສັ້ນທາງຫຼວງ, ເສັ້ນທາງຫຼັກໃນນະຄອນຫຼວງ, ເທດສະບານແຂວງ ແລະເທດສະບານເມືອງ. ຖ້າຫາກມີຜູ້ລະເມີດ ຜູ້ປົກຄອງຂອງເດັກທີ່ລະເມີດ ຈະຖືກປັບໃໝ 30.000 ກີບ.

ຫ້າມຜູ້ທີ່ມີອາຍຸຕໍ່າກວ່າ 18 ປີ ຂັບຂີ່ລົດສາມລໍ້, ລົດໄຖນາເດີນຕາມ, ລົດຕ໊ອກໆ ຫຼື ລົດສີ່ລໍ້ຂຶ້ນໄປ ທີ່ແລ່ນດ້ວຍເຄື່ອງຈັກ. ຖ້າຫາກມີການລະເມີດ ຜູ້ລະເມີດ ຫຼືຜູ້ປົກຄອງ ຈະຖືກປັບໃໝ 50.000 ກີບ.

ຫ້າມຜູ້ທີ່ມີອາຍຸຕໍ່າກວ່າ 25 ປີ ຂັບຂີ່ລົດຂົນສົ່ງໂດຍສານ ຫຼືລົດບັນທຸກ ທຸກປະເພດ. ຜູ້ລະເມີດຈະຖືກປັບໃໝ ຕາມປະເພດລົດ ດັ່ງນີ້:

- ລົດບັນທຸກ 100.000 ກີບ;
- ລົດໂດຍສານ 200.000 ກີບ.

ເຈົ້າໜ້າທີ່ຄວບຄຸມການຈະລາຈອນ ມີໜ້າທີ່ກັກລົດທີ່ນຳໃຊ້ເຂົ້າໃນການລະເມີດ ໂດຍຜູ້ທີ່ມີອາຍຸບໍ່ຄົບຕາມທີ່ໄດ້ກຳນົດໄວ້ຂ້າງເທິງນີ້ ຈົນກວ່າເຈົ້າຂອງລົດ ຫຼືຜູ້ປົກຄອງຂອງຜູ້ລະເມີດນັ້ນ ມາຮັບປະກັນເອົາ ໂດຍມີບົດບັນທຶກການລະເມີດໄວ້ເປັນຫລັກຖານແລ້ວ ຈຶ່ງສົ່ງລົດດັ່ງກ່າວນັ້ນຄືນ.

**ມາດຕາ 4. ການຂັບຂີ່ລົດຈັກໂດຍບໍ່ໃສ່ໝວກກັນກະທົບ**

ຜູ້ຂັບຂີ່ ແລະຜູ້ຊ້ອນທ້າຍລົດຈັກຜູ້ໃດ ຫາກບໍ່ໄດ້ໃສ່ໝວກກັນກະທົບ ໃນເວລາຂັບຂີ່ ຫຼືຊ້ອນທ້າຍ ຈະຖືກປັບໃໝ 30.000 ກີບ ຕໍ່ຄົນ ຕໍ່ ໜຶ່ງຄັ້ງ.

**ມາດຕາ 5. ການຂັບຂີ່ລົດໃນເວລາມຶນເມົາ**

ຜູ້ຂັບຂີ່ຜູ້ໃດ ທີ່ມີທາດມຶນເມົາ ຫຼືທາດເຫລົ້າຢູ່ໃນຮ່າງກາຍ ເກີນ 0,80 (g /l BrAC = 80 mg/ 100 ml) ກຣາມ/ລິດ ຫາກໄດ້ຂັບຂີ່ລົດ ຈະຖືກປັບໃໝ ຕາມປະເພດລົດ ດັ່ງນີ້:

| | |
|---|---|
| - ລົດຖີບ | 10.000 ກີບ; |
| - ລົດຈັກ, ລົດ 3 ລໍ້ ຕິດເຄື່ອງຈັກ, ລົດໄຖນາເດີນຕາມ | 50.000 ກີບ; |
| - ລົດເບົາ: ເກັງ, ກະບະ, ຈິບ, ຕູ້ | 100.000 ກີບ; |
| - ລົດໂດຍສານ 4 ລໍ້ | 250.000 ກີບ; |
| - ລົດບັນທຸກ 6 ລໍ້ ຂຶ້ນໄປ | 500.000 ກີບ; |
| - ລົດໂດຍສານ (ລົດບັສ) | 1.000.000 ກີບ. |

ໃນກໍລະນີທີ່ຜູ້ຂັບຂີ່ຍັງມີອາການມຶນເມົາແຮງຈົນບໍ່ສາມາດຄວບຄຸມສະຕິໄດ້ ເຈົ້າໜ້າທີ່ຈະກັກຜູ້ຂັບຂີ່ ພ້ອມທັງລົດໄວ້ກ່ອນ ຈົນກວ່າຈະຊ່ວງເມົາແລ້ວຈຶ່ງປ່ອຍໄປ.

**ມາດຕາ 6. ການຂັບຂີ່ລົດບໍ່ຖືກທິດທາງການຈະລາຈອນ**

ຜູ້ຂັບຂີ່ຜູ້ໃດຫາກໄດ້ຂັບຂີ່ລົດບໍ່ຖືກກັບທິດທາງການຈະລາຈອນ ຫຼື ບໍ່ຖືກຕາມຊ່ອງຈະລາຈອນທີ່ອະນຸຍາດ ຈະຖືກປັບໃໝ ຕາມປະເພດລົດ ດັ່ງນີ້:

| | |
|---|---|
| - ລົດຖີບ | 10.000 ກີບ; |
| - ລົດຈັກ, ລົດ 3 ລໍ້ ຕິດເຄື່ອງຈັກ, ລົດໄຖນາເດີນຕາມ | 30.000 ກີບ; |
| - ລົດເບົາ: ເກັງ, ກະບະ, ຈິບ, ຕູ້ | 40.000 ກີບ; |
| - ລົດໂດຍສານ 4 ລໍ້ | 50.000 ກີບ; |
| - ລົດບັນທຸກ 6 ລໍ້ | 70.000 ກີບ; |
| - ລົດບັນທຸກ 10 ລໍ້ ຂຶ້ນໄປ, ລົດໂດຍສານ (ລົດບັສ) | 100.000 ກີບ. |

**ມາດຕາ 7. ການຂັບຂີ່ລົດໄວເກີນກຳນົດ**

ຜູ້ຂັບຂີ່ຜູ້ໃດຫາກໄດ້ຂັບຂີ່ລົດໄວເກີນກຳນົດທີ່ທາງການກຳນົດໄວ້ ຈະຖືກປັບໃໝຕາມປະເພດລົດ ດັ່ງນີ້:

| | |
|---|---|
| - ລົດຈັກ, ລົດ 3 ລໍ້ ຕິດເຄື່ອງຈັກ | 30.000 ກີບ; |
| - ລົດເບົາ: ເກັງ, ກະບະ, ຈິບ, ຕູ້ | 50.000 ກີບ; |
| - ລົດໂດຍສານ 4 ລໍ້ | 50.000 ກີບ; |
| - ລົດບັນທຸກ 6 ລໍ້ | 50.000 ກີບ; |
| - ລົດບັນທຸກ 10 ລໍ້ ຂຶ້ນໄປ, ລົດໂດຍສານ (ລົດບັສ) | 50.000 ກີບ. |

**ມາດຕາ 8. ການຂັບຂີ່ລົດແຂ່ງກັນ ໂດຍບໍ່ໄດ້ຮັບອະນຸຍາດ**

ຜູ້ຂັບຂີ່ນັບແຕ່ສອງຄົນຂຶ້ນໄປ ຫາກໄດ້ຂັບລົດແຂ່ງຂັນກັນ ຢູ່ຕາມເສັ້ນທາງຈະລາຈອນ ໂດຍບໍ່ໄດ້

ຮັບອະນຸຍາດ ຈະຖືກປັບໃໝ ຕາມປະເພດລົດ ດັ່ງນີ້:

- ລົດຖີບ 10.000 ກີບ;
- ລົດຈັກ, ລົດ 3 ລໍ້ ຕິດເຄື່ອງຈັກ 100.000 ກີບ;
- ລົດເບົາ: ເກັ່ງ, ກະບະ, ຈີບ, ຕູ້ 500.000 ກີບ;
- ລົດໂດຍສານ 4 ລໍ້ 600.000 ກີບ;
- ລົດບັນທຸກ 6 ລໍ້ 600.000 ກີບ;
- ລົດບັນທຸກ 10 ລໍ້ຂຶ້ນໄປ, ລົດໂດຍສານ (ລົດບັສ) 700.000 ກີບ.

ການລະເມີດໃນແຕ່ລະຄັ້ງ ໃຫ້ບັນທຶກໃສ່ໃບຂັບຂີ່.

## ມາດຕາ 9. ການຂັບຂີ່ລົດຮຽງກັນ

ການຂັບຂີ່ລົດທຸກຊະນິດ ຕາມເສັ້ນທາງຫລວງ ທີ່ມີແຕ່ສອງຊ່ອງທາງຈະລາຈອນທີ່ສວນກັນ ແມ່ນໃຫ້ຂັບຂີ່ເປັນແຖວດຽວ, ຍົກເວັ້ນໃນເວລາແຊງກັນຂຶ້ນໜ້າ.

ຜູ້ຂັບຂີ່ຜູ້ໃດຫາກໄດ້ຂັບຂີ່ລົດຮຽງກັນເປັນໜ້າກະດານເກີນສອງຄັນຂຶ້ນໄປ ຈະຖືກປັບໃໝຕາມປະເພດລົດ ດັ່ງນີ້:

- ລົດຖີບ 10.000 ກີບ;
- ລົດຈັກ 50.000 ກີບ;
- ລົດ 3 ລໍ້ຕິດເຄື່ອງຈັກ, ລົດໄຖນາເດີນຕາມແກ່ລໍ້ 70.000 ກີບ.

## ມາດຕາ 10. ການຂັບຂີ່ລົດລ່ວງໄຟອຳນາດ, ປ້າຍຫ້າມ, ປ້າຍບອກຢຸດ

ຜູ້ຂັບຂີ່ຜູ້ໃດຫາກໄດ້ຂັບຂີ່ລົດລ່ວງໄຟແດງ, ປ້າຍຫ້າມຜ່ານ ຫຼືປ້າຍບອກຢຸດ ຈະຖືກປັບໃໝ ຕາມປະເພດລົດ ດັ່ງນີ້:

- ລົດຖີບ 15.000 ກີບ;
- ລົດຈັກ, ລົດ 3 ລໍ້ ຕິດເຄື່ອງຈັກ 50.000 ກີບ;
- ລົດເບົາ: ເກັ່ງ, ກະບະ, ຈີບ, ຕູ້ 70.000 ກີບ;
- ລົດໂດຍສານ 4 ລໍ້ 100.000 ກີບ;
- ລົດບັນທຸກ 6 ລໍ້ 150.000 ກີບ;
- ລົດບັນທຸກ 10 ລໍ້ ຂຶ້ນໄປ, ລົດໂດຍສານ (ລົດບັສ) 200.000 ກີບ.

## ມາດຕາ 11. ການຂັບຂີ່ລົດໂດຍບໍ່ເຄົາລົບສິດຂອງຜູ້ອື່ນ

ຜູ້ຂັບຂີ່ຜູ້ໃດຫາກໄດ້ຂັບຂີ່ລົດ ໂດຍບໍ່ເຄົາລົບສິດຂອງຜູ້ອື່ນ ເຊັ່ນ: ເມື່ອເຂົ້າສູ່ທາງຄົບ ຫຼືທາງແຍກທີ່ສະເໝີກັນ ບໍ່ປ່ອຍທາງໃຫ້ຜູ້ທີ່ຢູ່ເບື້ອງຂວາມືໄປກ່ອນ ຫຼື ເມື່ອເຂົ້າສູ່ທາງວົງວຽນ ກໍບໍ່ປ່ອຍທາງ ໃຫ້ລົດຢູ່ໃນວົງວຽນໄປກ່ອນ ຈະຖືກປັບໃໝ ຕາມປະເພດລົດ ດັ່ງນີ້:

- ລົດຖີບ, ລົດສາມລໍ້ຖີບ 10.000 ກີບ;

| | |
|---|---|
| - ລົດຈັກ, ລົດ 3 ລໍ້ ຕິດເຄື່ອງຈັກ | 30.000 ກີບ; |
| - ລົດເບົາ: ເກັ່ງ, ກະບະ, ຈິບ, ຕູ້ | 70.000 ກີບ; |
| - ລົດໂດຍສານ 4 ລໍ້ | 100.000 ກີບ; |
| - ລົດບັນທຸກ 6 ລໍ້ | 150.000 ກີບ; |
| - ລົດບັນທຸກ 10 ລໍ້ ຂຶ້ນໄປ, ລົດໂດຍສານ (ລົດບັສ) | 200.000 ກີບ. |

## ມາດຕາ 12. ການຂັບຂີ່ລົດດ້ວຍຄວາມປະໝາດ

ຜູ້ຂັບຂີ່ຜູ້ໃດຫາກໄດ້ຂັບຂີ່ລົດດ້ວຍຄວາມປະໝາດ ເຊັ່ນ: ໃຊ້ໂທລະສັບມືຖື, ເບິ່ງໂທລະພາບ ຫຼື ເບິ່ງຮູບພາບຊີດີ ໃນເວລາຂັບຂີ່ ຫຼືຂັບລົດດ້ວຍຄວາມຄຶກຄະນອງ, ເຈີດຊ້າຍເຈີດຂວາ ຈະຖືກປັບໃໝ ຕາມປະເພດລົດ ດັ່ງນີ້:

| | |
|---|---|
| - ລົດຖີບ | 20.000 ກີບ; |
| - ລົດຈັກ, ລົດ 3 ລໍ້ ຕິດເຄື່ອງຈັກ | 50.000 ກີບ; |
| - ລົດເບົາ: ເກັ່ງ, ກະບະ, ຈິບ, ຕູ້ | 100.000 ກີບ; |
| - ລົດໂດຍສານ 4 ລໍ້ | 200.000 ກີບ; |
| - ລົດບັນທຸກ 6 ລໍ້ | 300.000 ກີບ; |
| - ລົດບັນທຸກ 10 ລໍ້ ຂຶ້ນໄປ, ລົດໂດຍສານ (ລົດບັສ) | 300.000 ກີບ. |

## ມາດຕາ 13. ການຂັບຂີ່ຕຳລະບົບສາທາລະນະປະໂຫຍດ ຫລື ສາທາລະນຸປະໂພກ

ຜູ້ຂັບຂີ່ຜູ້ໃດຫາກໄດ້ຂັບຂີ່ລົດຕຳດອນກາງທາງ, ຂອບທາງ, ເສົາໄຟຟ້າ, ເສົາໂທລະສັບ, ທໍ່ສົ່ງນ້ຳ ປະປາ, ໂຖດອກໄມ້ເອ້ທາງ, ລະບົບສັນຍານການຈະລາຈອນ ຫຼືສິ່ງປະກອບອື່ນໆຂອງທາງ ຈະຖືກປັບ ໃໝຕາມປະເພດລົດ ດັ່ງນີ້:

| | |
|---|---|
| - ລົດຈັກ, ລົດ 3 ລໍ້ ຕິດເຄື່ອງຈັກ | 30.000 ກີບ; |
| - ລົດເບົາ: ເກັ່ງ, ກະບະ, ຈິບ, ຕູ້ | 100.000 ກີບ; |
| - ລົດໂດຍສານ 4 ລໍ້ | 100.000 ກີບ; |
| - ລົດບັນທຸກ 6 ລໍ້ | 150.000 ກີບ; |
| - ລົດບັນທຸກ 10 ລໍ້ ຂຶ້ນໄປ, ລົດໂດຍສານ(ລົດບັສ) | 200.000 ກີບ. |

ນອກຈາກຈະຖືກປັບໃໝແລ້ວ ຜູ້ລະເມີດຍັງຕ້ອງຮັບຜິດຊອບໃຊ້ແທນຄ່າເສຍຫາຍທັງໝົດ(ຖ້າມີ).

## ມາດຕາ 14. ການຈອດລົດຢູ່ບ່ອນຫ້າມຈອດ

ຜູ້ຂັບຂີ່ຜູ້ໃດຫາກໄດ້ຈອດລົດຢູ່ບ່ອນຫ້າມຈອດ, ຈອດບ່ອນມີປ້າຍ ຫຼືມີເຄື່ອງໝາຍຫ້າມ, ຈອດ ທາງຄ້ອຍ, ຈອດທາງໂຄ້ງ, ຈອດຢູ່ຫົວຂົວ, ຈອດຢູ່ກາງຂົວ, ຈອດຂວາງທາງ, ຈອດຕັນທາງ, ຈອດຊ້ອນ ກັນ, ຈອດເບື້ອງຊ້າຍ ຫຼືຈອດຢູ່ໃກ້ທາງຄົບ ຫຼືທາງແຍກ ໃນຂອບເຂດ 15 ແມັດ ຈະຖືກປັບໃໝ ຕາມປະ ເພດລົດ ດັ່ງນີ້:

| | |
|---|---|
| - ລົດຈັກ | 30.000 ກີບ; |
| - ລົດ 3 ລໍ້ ຕິດເຄື່ອງຈັກ | 50.000 ກີບ; |
| - ລົດເບົາ: ເກັ່ງ, ກະບະ, ຈິບ, ຕູ້ | 70.000 ກີບ; |
| - ລົດໂດຍສານ 4 ລໍ້ | 100.000 ກີບ; |
| - ລົດບັນທຸກ 6 ລໍ້ | 150.000 ກີບ; |
| - ລົດບັນທຸກ 10 ລໍ້ ຂຶ້ນໄປ, ລົດໂດຍສານ(ລົດບັສ) | 200.000 ກີບ. |

**ມາດຕາ 15. ການຢຸດລົດທັບ, ກາຍເສັ້ນໝາຍຢຸດ ຫລືເສັ້ນມ້າລາຍ**

ຜູ້ຂັບຂີ່ຜູ້ໃດ ຫາກໄດ້ຢຸດລົດທັບ ຫຼືກາຍເສັ້ນໝາຍຢຸດ ຫຼືເສັ້ນມ້າລາຍ ຈະຖືກປັບໃໝ ຕາມປະເພດລົດ ດັ່ງນີ້:

| | |
|---|---|
| - ລົດຖີບ, ລົດສາມລໍ້ | 10.000 ກີບ; |
| - ລົດຈັກ | 20.000 ກີບ; |
| - ລົດ 3 ລໍ້ ຕິດເຄື່ອງຈັກ | 40.000 ກີບ; |
| - ລົດ 4 ລໍ້ ທຸກປະເພດ | 50.000 ກີບ; |
| - ລົດ 6 ລໍ້ ທຸກປະເພດ | 60.000 ກີບ; |
| - ລົດບັນທຸກ 10 ລໍ້ ຂຶ້ນໄປ, ລົດໂດຍສານ (ລົດບັສ) | 100.000 ກີບ. |

**ມາດຕາ 16. ການຂັບຂີ່ລົດບໍ່ຖືກຊ່ອງທາງ ແລະບໍ່ແນບຂວາ**

ການຂັບຂີ່ລົດຈັກ, ລົດຖີບ, ລົດລໍ້ຍູ້, ລົດສາມລໍ້ຖີບ, ລົດສາມລໍ້ຈັກ, ລົດໄຖນາເດີນຕາມທຸກປະເພດ ແມ່ນໃຫ້ແລ່ນຕາມຊ່ອງທາງທີ່ກໍານົດໄວ້. ໃນກໍລະນີທີ່ບໍ່ມີຊ່ອງທາງ ແມ່ນໃຫ້ແລ່ນແນບຂວາມືຂອງຕົນໂດຍຫ່າງຈາກຂອບທາງບໍ່ເກີນ 2 ແມັດ.

ຜູ້ຂັບຂີ່ຜູ້ໃດຫາກໄດ້ລະເມີດ ຈະຖືກປັບໃໝ ຕາມປະເພດລົດ ຫຼືພາຫະນະ ດັ່ງນີ້:

| | |
|---|---|
| - ລົດຖີບ, ລົດສາມລໍ້ຖີບ | 10.000 ກີບ; |
| - ລົດຈັກ, ລົດສາມລໍ້ຈັກ | 20.000 ກີບ; |
| - ລົດໄຖນາເດີນຕາມແກ່ລໍ້ ແລະລົດ 3 ລໍ້ ຕິດເຄື່ອງຈັກ | 30.000 ກີບ. |

**ມາດຕາ 17. ການນໍາໃຊ້ລະບົບໄຟແສງສະຫວ່າງ ແລະລະບົບໄຟສັນຍານ ທີ່ບໍ່ຖືກຕ້ອງ**

ຜູ້ຂັບຂີ່ຜູ້ໃດຫາກໄດ້ຂັບຂີ່ລົດ ທີ່ນໍາໃຊ້ລະບົບໄຟແສງສະຫວ່າງ ແລະ ລະບົບໄຟສັນຍານທີ່ບໍ່ຖືກຕ້ອງ ເຊັ່ນ: ບໍ່ໃຕ້ໄຟຕາ ແລະໄຟທ້າຍ ໃນຍາມກາງຄືນ ຫຼືໃນຍາມກາງເວັນທີ່ມີຝົນຕົກໜັກ, ນໍ້າໝອກລົງໜາ ຫຼືໃນເວລາທີ່ມີອາກາດມືດມົວ ຫຼືໃຊ້ໄຟຕາສູງໃນເວລາສວນທາງກັບລົດຄັນອື່ນ ຈະຖືກປັບໃໝ ຕາມປະເພດລົດ ດັ່ງນີ້:

| | |
|---|---|
| - ລົດຖີບ | 10.000 ກີບ; |
| - ລົດຈັກ, ລົດ 3 ລໍ້ ຕິດເຄື່ອງຈັກ, ລົດໄຖນາເດີນຕາມ | 20.000 ກີບ; |

| | |
|---|---|
| - ລົດເບົາ: ເກັ່ງ, ກະບະ, ຈີບ, ຕູ້ | 30.000 ກີບ; |
| - ລົດໂດຍສານ 4 ລໍ້ | 50.000 ກີບ; |
| - ລົດບັນທຸກ 6 ລໍ້ | 70.000 ກີບ; |
| - ລົດບັນທຸກ 10 ລໍ້ ຂຶ້ນໄປ, ລົດໂດຍສານ (ລົດບັສ) | 100.000 ກີບ. |

**ມາດຕາ 18. ການແຊງຂຶ້ນໜ້າ, ການຖອຍຫລັງ ແລະການລ້ຽວ ທີ່ບໍ່ຖືກຕ້ອງ**

ຜູ້ຂັບຂີ່ຜູ້ໃດຫາກໄດ້ຂັບລົດແຊງຂຶ້ນໜ້າລົດຄັນອື່ນ, ຂັບຖອຍຫລັງ, ຂັບລົດລ້ຽວຊ້າຍລ້ຽວຂວາ ຫຼື ລ້ຽວກັບ ໂດຍບໍ່ສົ່ງສັນຍານໃຫ້ຜູ້ຂັບຂີ່ລົດຄັນອື່ນຮູ້ລ່ວງໜ້າ ເຊັ່ນ: ສົ່ງໄຟສັນຍານ ຫຼືເດ່ແຂນອອກ ແລະ ໂດຍບໍ່ຢູ່ໃນໄລຍະທີ່ຮັບປະກັນຄວາມປອດໄພ (30 ແມັດ) ຈະຖືກປັບໃໝ ຕາມປະເພດລົດ ດັ່ງນີ້:

| | |
|---|---|
| - ລົດຖີບ, ລົດສາມລໍ້ຖີບ | 20.000 ກີບ; |
| - ລົດຈັກ | 30.000 ກີບ; |
| - ລົດໄຖນາເດີນຕາມແກ່ລໍ້ ແລະລົດ 3 ລໍ້ ຕິດເຄື່ອງຈັກ | 40.000 ກີບ; |
| - ລົດເບົາ: ເກັ່ງ, ກະບະ, ຈີບ, ຕູ້ | 50.000 ກີບ; |
| - ລົດໂດຍສານ 4 ລໍ້ | 60.000 ກີບ; |
| - ລົດບັນທຸກ 6 ລໍ້ | 70.000 ກີບ; |
| - ລົດບັນທຸກ 10 ລໍ້ ຂຶ້ນໄປ, ລົດໂດຍສານ (ລົດບັສ) | 80.000 ກີບ. |

**ມາດຕາ 19. ການລາກແກ່ຍານພາຫະນະ ທີ່ບໍ່ຖືກຕ້ອງ**

ຜູ້ຂັບຂີ່ຜູ້ໃດຫາກໄດ້ຂັບລົດແກ່ລໍ້, ລາກ ຫຼືພວງ ທີ່ບໍ່ຖືກຕ້ອງຕາມເຕັກນິກ ທີ່ທາງການກຳນົດໄວ້ ຊຶ່ງກີດຂວາງ ແລະອາດເປັນອັນຕະລາຍຕໍ່ການສັນຈອນ ຈະຖືກປັບໃໝ ຕາມປະເພດລົດ ດັ່ງນີ້:

| | |
|---|---|
| - ລົດຖີບ, ລົດສາມລໍ້ຖີບ | 20.000 ກີບ; |
| - ລົດຈັກ | 30.000 ກີບ; |
| - ລົດໄຖນາເດີນຕາມແກ່ລໍ້ ແລະລົດ 3 ລໍ້ ຕິດເຄື່ອງຈັກ | 50.000 ກີບ; |
| - ລົດເບົາ: ເກັ່ງ, ກະບະ, ຈີບ, ຕູ້ | 60.000 ກີບ; |
| - ລົດໂດຍສານ 4 ລໍ້ | 70.000 ກີບ; |
| - ລົດບັນທຸກ 6 ລໍ້ | 80.000 ກີບ; |
| - ລົດບັນທຸກ 10 ລໍ້ ຂຶ້ນໄປ, ລົດໂດຍສານ (ລົດບັສ) | 100.000 ກີບ; |
| - ລົດພວງ, ລົດລາກແກ່ | 200.000 ກີບ. |

**ມາດຕາ 20. ການຍ່າງໄປຕາມທາງ ແລະການຍ່າງຂ້າມທາງ**

ການຍ່າງຕາມທາງ ຫຼືຍ່າງຂ້າມທາງ ໂດຍສະເພາະຢູ່ໃນຕົວເມືອງ ໃຫ້ປະຕິບັດດັ່ງນີ້: ການຍ່າງ ຕາມທາງແມ່ນໃຫ້ຍ່າງໄປຕາມຂອບເຂດ ຫລືຊ່ອງທາງ ທີ່ກຳນົດໄວ້ສຳລັບໃຫ້ຄົນຍ່າງ. ໃນກໍລະນີທີ່ບໍ່ມີ

ຂອບເຂດ ຫຼືຊ່ອງທາງສະເພາະສຳລັບໃຫ້ຄົນຍ່າງ ໃຫ້ຍ່າງໄປຕາມແຄມທາງເບື້ອງຂວາມືຂອງຕົນ. ຖ້າຫາກມີຫຼາຍຄົນຍ່າງນຳກັນ ໃຫ້ຍ່າງເປັນແຖວດຽວ ແລະບໍ່ໃຫ້ເກີນ 1 ແມັດ ຫ່າງຈາກ ຂອບທາງ.

ການຍ່າງຂ້າມທາງ ແມ່ນໃຫ້ຂ້າມຢູ່ທາງມ້າລາຍ. ໃນກໍລະນີທີ່ບໍ່ມີທາງມ້າລາຍ ແມ່ນໃຫ້ໄປຂ້າມຢູ່ບ່ອນທາງຄົບກັນ ຫຼືທາງແຍກ. ໃນກໍລະນີຢູ່ທາງຊື່ ແມ່ນໃຫ້ຂ້າມທາງດ້ວຍຄວາມລະມັດລະວັງ, ເບິ່ງທາງຊ້າຍ ແລະທາງຂວາ ເມື່ອເຫັນວ່າມີຄວາມປອດໄພດີແລ້ວຈຶ່ງຂ້າມ ຫຼືໃຫ້ເຈົ້າໜ້າທີ່ທີ່ຢູ່ໃກ້ພາຂ້າມ. ຜູ້ໃດລະເມີດ ຈະຖືກສຶກສາອົບຮົມ ແລະຕັກເຕືອນ.

### ມາດຕາ 21. ການລ້ຽງສັດ ແລະການປ່ອຍສັດລ້ຽງຢູ່ຕາມເສັ້ນທາງ

ຫ້າມລ້ຽງ ຫຼືປ່ອຍສັດທຸກຊະນິດຕາມເສັ້ນທາງ ໂດຍສະເພາະຢູ່ໃນເຂດເທດສະບານແຂວງ ແລະເທດສະບານເມືອງ. ການເຄື່ອນຍ້າຍສັດຕາມເສັ້ນທາງ ຕ້ອງມີຜູ້ຄວບຄຸມ ແລະປະຕິບັດ ຕາມກົດຈະລາຈອນ.

ເຈົ້າຂອງ ຫຼືຜູ້ຄອບຄອງສັດຜູ້ໃດຫາກໄດ້ລະເມີດ ຈະຖືກປັບໃໝ 20.000 ກີບ ຕໍ່ໜຶ່ງວັນ ຕໍ່ສັດສີ່ຕີນ ໜຶ່ງໂຕ. ໃນກໍລະນີທີ່ມີສັດລ້ຽງຂາດການຮັກສາ ຫຼືຖືກປ່ອຍປະຕາມເສັ້ນທາງ ເຈົ້າໜ້າທີ່ຈະກັກສັດດັ່ງກ່າວໄວ້ ຈົນກວ່າຈະມີເຈົ້າຂອງສັດມາໄຖ່ຖອນເອົາຄືນ.

ໃນກໍລະນີທີ່ສັດຫາກເປັນຕົ້ນເຫດຂອງການເກີດອຸປະຕິເຫດ ຫຼືໄດ້ສ້າງຄວາມເສັຍຫາຍແກ່ສິ່ງປະກອບຕ່າງໆຂອງທາງ ເຈົ້າຂອງ ຫຼືຜູ້ຄອບຄອງສັດ ຕ້ອງຮັບຜິດຊອບຕໍ່ຄວາມເສັຍຫາຍທີ່ເກີດຂຶ້ນ.

### ມາດຕາ 22. ການກໍ່ສ້າງ ແລະການສ້ອມແປງທາງ ຫລືສິ່ງອື່ນໆຕາມເສັ້ນທາງ ໂດຍບໍ່ໄດ້ປະຕິບັດຕາມລະບຽບການຮັກສາຄວາມປອດໄພຂອງການສັນຈອນ

ການກໍ່ສ້າງ ແລະການສ້ອມແປງທາງ, ການຂຸດທາງ ເພື່ອຕິດຕັ້ງ ຫຼືສ້ອມແປງລະບົບນ້ຳປະປາ, ໄຟຟ້າ ຫຼືໂທລະສັບ ລວມທັງການຈັດວາງວັດສະດຸກໍ່ສ້າງ ແລະສ້ອມແປງດັ່ງກ່າວ ຕ້ອງປະຕິບັດ ຕາມລະບຽບການຮັກສາຄວາມປອດໄພຂອງການສັນຈອນຢ່າງເຂັ້ມງວດຄື: ຕ້ອງຕິດຕັ້ງເຄື່ອງໝາຍເຕືອນອັນຕະລາຍ ໂດຍໃຫ້ເຮັດເປັນປ້າຍ ຫຼືໃຊ້ດອກໄຟທີ່ເຍືອງໃຫ້ເຫັນແຈ້ງ ແລະຊັດເຈນໃນໄລຍະ 100 ແມັດ ຈາກທຸກທິດທາງ, ພ້ອມກັນນັ້ນ ກໍຕ້ອງຕິດຕັ້ງເຄື່ອງປ້ອງກັນ ຫຼືລ້ອມຮົ້ວສະຖານທີ່ກໍ່ສ້າງ ຫຼືສ້ອມແປງດັ່ງກ່າວໄວ້ເປັນຢ່າງດີ.

ຜູ້ຮັບຜິດຊອບການກໍ່ສ້າງ ແລະສ້ອມແປງ ຫາກໄດ້ລະເມີດລະບຽບການດັ່ງກ່າວ ຈະຖືກປັບໃໝ 500.000 ກີບ. ໃນກໍລະນີຫາກເກີດມີອຸປະຕິເຫດ ຜູ້ຮັບຜິດຊອບການກໍ່ສ້າງ ແລະສ້ອມແປງ ຕ້ອງໄດ້ຮັບຜິດຊອບຕໍ່ຜົນເສັຍຫາຍທັງໝົດ.

### ມາດຕາ 23. ລົດເປ່ເພກາງທາງ

ໃນກໍລະນີທີ່ມີລົດຕິດຂັດ ຫລືເປ່ເພ ຕາມເສັ້ນທາງໃນເຂດຕົວເມືອງ ແລະເທດສະບານ ຜູ້ຂັບຂີ່ລົດດັ່ງກ່າວ ຕ້ອງຍົກຍ້າຍ ຫລືຮັບຜິດຊອບການຍົກຍ້າຍອອກຈາກຊ່ອງການຈະລາຈອນ. ຫ້າມສ້ອມແປງ ຫຼືປະລົດໄວ້ກາງທາງ.

ຜູ້ຂັບຂີ່ ຫລືເຈົ້າຂອງລົດທີ່ລະເມີດ ຈະຖືກປັບໃໝ ຕາມປະເພດລົດ ດັ່ງນີ້:

- ລົດຈັກ 30.000 ກີບ;
- ລົດ 3 ລໍ້ ຕິດເຄື່ອງຈັກ 50.000 ກີບ;
- ລົດເບົາ 100.000 ກີບ;
- ລົດ 6 ລໍ້ ຂຶ້ນໄປ 200.000 ກີບ.

## ມາດຕາ 24. ການກອງວັດສະດຸກໍ່ສ້າງກີດຂວາງການສັນຈອນ

ບຸກຄົນຜູ້ໃດຫາກໄດ້ກອງວັດສະດຸກໍ່ສ້າງ ເຊັ່ນ: ກອງໄມ້, ກອງຫີນ, ກອງຊາຍ, ກອງດິນ, ກອງເຫຼັກ ແລະວັດສະດຸອື່ນໆ ໃສ່ເສັ້ນທາງ, ແຄມທາງ, ທາງຍ່າງ ຫຼື ຮ່ອງນໍ້າແຄມທາງ ຊຶ່ງເປັນການກີດຂວາງການສັນຈອນ ຈະຖືກປັບໃໝ 200.000 ກີບ, ພ້ອມທັງ ຍົກຍ້າຍວັດສະດຸກໍ່ສ້າງດັ່ງກ່າວອອກພາຍໃນໜຶ່ງວັນ. ຖ້າຫາກກາຍກຳນົດເວລາດັ່ງກ່າວ ຜູ້ລະເມີດຍັງບໍ່ຍົກຍ້າຍວັດສະດຸກໍ່ສ້າງດັ່ງກ່າວອອກ ເຈົ້າໜ້າທີ່ຈະປັບໃໝເພີ່ມ ຊົ່ວໂມງລະ 10.000 ກີບ/ມ$^3$.

ໃນກໍລະນີຫາກເກີດມີອຸປະຕິເຫດ ຍ້ອນວັດສະດຸກໍ່ສ້າງດັ່ງກ່າວ ເຈົ້າຂອງວັດສະດຸກໍ່ສ້າງນັ້ນຕ້ອງຮັບຜິດຊອບຕໍ່ຜົນເສັຍຫາຍທີ່ເກີດຂຶ້ນທັງໝົດ.

## ມາດຕາ 25. ການປຸກສ້າງທີ່ລ່ວງລໍ້າຂອບເຂດການສັນຈອນ

ບຸກຄົນຜູ້ໃດຫາກໄດ້ປຸກສ້າງອາຄານ, ຕໍ່ເຕີບ, ປຸກຕູບ ຫຼືປຸກສ້າງສິ່ງອື່ນໆ ໃນງານຕ່າງໆ ຊຶ່ງກວມເອົາຂອບເຂດທາງຄົນຍ່າງ ຫລືເສັ້ນທາງການສັນຈອນແບບຖາວອນ ຫລືຊົ່ວຄາວ ໂດຍບໍ່ໄດ້ຮັບອະນຸຍາດຈາກອົງການທີ່ກ່ຽວຂ້ອງ ຈະຖືກປັບໃໝ 300.000 ກີບ, ພ້ອມທັງໃຫ້ຍ້າຍ ຫລືຍົກຍ້າຍອອກພາຍໃນ 24 ຊົ່ວ ໂມງ. ຖ້າຫາກກາຍກຳນົດເວລາດັ່ງກ່າວ ເຈົ້າໜ້າທີ່ຈະປັບໃໝເພີ່ມ ຊົ່ວໂມງລະ 10.000 ກີບ.

## ມາດຕາ 26. ການນຳໃຊ້ຂອບເຂດການສັນຈອນ ໂດຍບໍ່ຖືກຕ້ອງ

ບຸກຄົນຜູ້ໃດ ຫາກໄດ້ຕັ້ງລໍ້, ກາງເຕັ້ນເຮັດງານຕ່າງໆ, ວາງເຄື່ອງຂອງ ຫຼືສິນຄ້າທຸກປະເພດ ເພື່ອຂາຍຢູ່ໃນຖະໜົນ, ບ່າທາງ ແລະທາງຄົນຍ່າງ ຈະຖືກປັບໃໝ 50.000 ກີບ. ເຈົ້າຂອງສຳນັກງານ ຫລືອາຄານທີ່ຕັ້ງຢູ່ແຄມທາງ ຫາກ ໄດ້ອະນຸຍາດໃຫ້ມີການກະທຳດັ່ງກ່າວ ກໍຈະຖືກປັບໃໝ 50.000 ກີບ ເຊັ່ນກັນ.

ບຸກຄົນຜູ້ໃດຫາກໄດ້ດຳເນີນກິດຈະການຂາຍລົດ, ສ້ອມແປງລົດ, ຮ້ານອາຫານ, ຮ້ານບັນເທີງ ແລະການບໍລິການອື່ນໆ ໂດຍການນຳໃຊ້ຖະໜົນ, ບ່າທາງ ແລະທາງຄົນຍ່າງ ເປັນບ່ອນວາງຂາຍ, ສ້ອມແປງລົດ, ຕັ້ງໂຕະອາຫານ ຫຼືວາງສິນຄ້າ ຈະຖືກປັບໃໝ 200.000 ກີບ ຕໍ່ຄັ້ງ. ຖ້າຫາກມີການລະເມີດເຖິງສາມຄັ້ງ ຜູ້ລະເມີດຈະຖືກຖອດຖອນໃບອະນຸຍາດດຳເນີນທຸລະກິດ ແລະສັ່ງໃຫ້ປິດຮ້ານ.

# ໝວດທີ 3
## ອັດຕາປັບໃໝ ສຳລັບລະເມີດລະບຽບການດ້ານເຕັກນິກຂອງຍານພາຫະນະ

### ມາດຕາ 27. ການດັດແປງລະບົບເຕັກນິກ ຂອງຍານພາຫະນະ ແລະການຂາດການກວດກາດ້ານເຕັກນິກ

ຍານພາຫະນະທີ່ແລ່ນດ້ວຍເຄື່ອງຈັກທຸກປະເພດ ຕ້ອງໄດ້ຮັບການກວດກາສະພາບເຕັກນິກ ຕາມລະບຽບການທີ່ອົງການລັດກ່ຽວຂ້ອງໄດ້ວາງອອກ ຢ່າງເຂັ້ມງວດ, ຕ້ອງມີສະພາບເຕັກນິກ ທີ່ຮັບປະກັນຄວາມປອດໄພ ຊຶ່ງຢັ້ງຢືນໂດຍສູນກວດກາສະພາບເຕັກນິກລົດ ທີ່ໄດ້ຮັບອະນຸຍາດດຳເນີນການ ຢ່າງຖືກຕ້ອງ ຕາມລະບຽບກົດໝາຍ.

ຖ້າຍານພາຫະນະໃດຫາກບໍ່ໄດ້ກວດກາເຕັກນິກ ແລະມີສະພາບເຕັກນິກ ທີ່ບໍ່ຖືກຕ້ອງ ຕາມມາດຕະຖານຂອງໂຮງງານຜະລິດຍ້ອນມີການດັດແປງລະບົບເຕັກນິກທີ່ເປັນພື້ນຖານອັນສຳຄັນ ໂດຍບໍ່ໄດ້ຮັບອະນຸຍາດຈາກອົງການລັດທີ່ກ່ຽວຂ້ອງ ຜູ້ຂັບຂີ່, ເຈົ້າຂອງ ຫຼືຜູ້ຄອບຄອງຍານພາຫະນະດັ່ງກ່າວ ຈະຖືກປັບໃໝ ຕາມປະເພດຍານພາຫະນະ ດັ່ງນີ້:

| | |
|---|---|
| - ລົດຈັກ, ລົດ 3 ລໍ້ ຕິດເຄື່ອງຈັກ | 50.000 ກີບ; |
| - ລົດເບົາ: ເກັ່ງ, ກະບະ, ຈິບ, ຕູ້ | 100.000 ກີບ; |
| - ລົດໂດຍສານ 4 ລໍ້ | 150.000 ກີບ; |
| - ລົດບັນທຸກ 6 ລໍ້ | 200.000 ກີບ; |
| - ລົດບັນທຸກ 10 ລໍ້ ຂຶ້ນໄປ, ລົດໂດຍສານ (ລົດບັສ) | 300.000 ກີບ. |

### ມາດຕາ 28. ສະພາບເຕັກນິກຂອງຍານພາຫະນະ ທີ່ບໍ່ໄດ້ມາດຖານ

ຍານພາຫະນະໃດຫາກມີສະພາບເຕັກນິກທີ່ບໍ່ໄດ້ມາດຖານ ຍ້ອນຂາດຊິ້ນສ່ວນປະກອບອັນຈຳເປັນຢ່າງໃດຢ່າງໜຶ່ງ ຫຼືມີການດັດແປງທີ່ບໍ່ຖືກຕາມມາດຕະຖານເຕັກນິກ ຊຶ່ງອາດກໍ່ໃຫ້ເກີດການລົບກວນ ຫຼືເປັນອັນຕະລາຍຕໍ່ການສັນຈອນ ເຊັ່ນ: ລະບົບໄຟແສງສະຫວ່າງ, ໄຟທ້າຍ, ໄຟສັນຍານບໍ່ມີ ຫຼືມີແຕ່ບໍ່ຮຸ່ງແຈ້ງດີ, ໄຟຕາມີແສງຕ່ຳໂພດ ຫຼືສູງໂພດ, ລະບົບຫ້າມລໍ້ບໍ່ຕິດດີ, ບໍ່ມີແວ່ນສ່ອງຂ້າງ, ແວ່ນສ່ອງຫລັງ, ທໍ່ໄອເສຍປ່ອຍຄວັນດຳຄວັນຂາວ ແລະມີສຽງດັງເກີນກຳນົດ, ລົດບັນທຸກມີການຕໍ່ເຕີມປີງ, ຕໍ່ເຕີມຕົວຖັງ ຜູ້ຂັບຂີ່, ເຈົ້າຂອງ ຫຼື ຜູ້ຄອບຄອງຍານພາຫະນະດັ່ງກ່າວ ຈະຖືກປັບໃໝ ຕາມປະເພດພາຫະນະດັ່ງນີ້:

| | |
|---|---|
| - ລົດຈັກ, ລົດ 3 ລໍ້ ຕິດເຄື່ອງຈັກ | 30.000 ກີບ; |
| - ລົດເບົາ: ເກັ່ງ, ກະບະ, ຈິບ, ຕູ້ | 50.000 ກີບ; |
| - ລົດໂດຍສານ 4 ລໍ້ | 60.000 ກີບ; |
| - ລົດບັນທຸກ 6 ລໍ້ | 70.000 ກີບ; |
| - ລົດບັນທຸກ 10 ລໍ້ ຂຶ້ນໄປ, ລົດໂດຍສານ ( ລົດບັສ ) | 90.000 ກີບ. |

ສຳລັບຍານພາຫະນະໃດທີ່ມີການດັດແປງສະພາບເຕັກນິກ, ໃຊ້ເຄື່ອງສຽງ ແລ້ວກໍ່ໃຫ້ເກີດມີສຽງດັງລົບກວນເກີນຂອບເຂດ ໃນເວລາສັນຈອນຕາມເສັ້ນທາງ ຜູ້ຂັບຂີ່ຍານພາຫະນະນັ້ນ ຈະຖືກປັບໃໝ 500.000 ກີບ.

## ໝວດທີ 4

## ອັດຕາປັບໃໝ ສຳລັບການລະເມີດລະບຽບການດ້ານເອກະສານ ຂອງຜູ້ຂັບຂີ່ ແລະຂອງຍານພາຫະນະ

### ມາດຕາ 29. ການຂັບຂີ່ລົດ ໂດຍບໍ່ມີເອກະສານຄົບຖ້ວນ

ຜູ້ຂັບຂີ່ລົດທຸກຄັ້ງຕ້ອງມີເອກະສານຄົບຖ້ວນດັ່ງນີ້: ໃບຂັບຂີ່, ໃບທະບຽນລົດ, ໃບກວດກາເຕັກນິກ, ໃບເສັຍຄ່າທາງ, ໃບປະກັນໄພລົດ. ສຳລັບລົດທີ່ເຮັດທຸລະກິດຍັງຕ້ອງມີເອກະສານ ກ່ຽວກັບທຸລະກິດຢ່າງຄົບຖ້ວນ.

ຜູ້ຂັບຂີ່ຜູ້ໃດຫາກຂາດເອກະສານໃດໜຶ່ງທີ່ກ່າວມາຂ້າງເທິງນີ້ຈະຖືກປັບໃໝຕາມປະເພດລົດດັ່ງນີ້:

| | |
|---|---|
| - ລົດຈັກ | 20.000 ກີບ; |
| - ລົດ 3 ລໍ້ ຕິດເຄື່ອງຈັກ | 25.000 ກີບ; |
| - ລົດເບົາ: ເກັງ, ກະບະ, ຈິບ, ຕູ້ນ້ອຍ | 40.000 ກີບ; |
| - ລົດໂດຍສານ 4 ລໍ້ | 100.000 ກີບ; |
| - ລົດບັນທຸກ 6 ລໍ້ | 60.000 ກີບ; |
| - ລົດບັນທຸກ 10 ລໍ້ ຂຶ້ນໄປ, ລົດໂດຍສານ ( ລົດບັສ ) | 150.000 ກີບ. |

### ມາດຕາ 30. ການຂັບຂີ່ລົດ ໂດຍລືມໃບຂັບຂີ່ ຫລືເອກະສານລົດ

ໃນກໍລະນີທີ່ຜູ້ຂັບຂີ່ລົດຫາກລືມໃບຂັບຂີ່ ຫຼືລືມເອກະສານໃດໜຶ່ງທີ່ກ່ຽວຂ້ອງກັບລົດນັ້ນ ເຊັ່ນ: ໃບທະບຽນ, ໃບເສັຍຄ່າທາງ, ໃບຢັ້ງຢືນການກວດກາເຕັກນິກ, ໃບອະນຸຍາດແລ່ນລົດ ຫຼືໃບອະນຸຍາດນຳໃຊ້ລົດເຮັດວິສາຫະກິດຂົນສົ່ງ ຫຼືການຂົນສົ່ງສະເພາະ, ໃບປະກັນໄພທີ່ກ່ຽວຂ້ອງ ເຈົ້າໜ້າທີ່ຄວບຄຸມການຈະລາຈອນ ຈະກັກເອກະສານໃດໜຶ່ງ ແລ້ວອະນຸຍາດໃຫ້ຜູ້ກ່ຽວໄປນຳເອົາເອກະສານຕ່າງໆທີ່ລືມນັ້ນມາຢັ້ງຢືນ ຈາກນັ້ນຈຶ່ງຈະໄດ້ຮັບການປ່ອຍລົດໄປ.

ຜູ້ຂັບຂີ່ຜູ້ໃດ ຫາກບໍ່ໄດ້ເອົາໃບຂັບຂີ່ ຫຼືເອກະສານລົດມາຢັ້ງຢືນ ຈະຖືກປັບໃໝ ຕາມປະເພດລົດດັ່ງນີ້:

| | |
|---|---|
| - ລົດຈັກ | 10.000 ກີບ; |
| - ລົດ 3 ລໍ້ ຕິດເຄື່ອງຈັກ | 15.000 ກີບ; |
| - ລົດເບົາ: ເກັງ, ກະບະ, ຈິບ, ຕູ້ | 20.000 ກີບ; |
| - ລົດໂດຍສານ 4 ລໍ້ | 25.000 ກີບ; |

- ລົດບັນທຸກ 6 ລໍ້ 30.000 ກີບ;
- ລົດບັນທຸກ 10 ລໍ້ ຂຶ້ນໄປ, ລົດໂດຍສານ (ລົດບັສ) 40.000 ກີບ.

ໃນກໍລະນີທີ່ບໍ່ມີໃບທະບຽນລົດມາຢັ້ງຢືນ ເຈົ້າໜ້າທີ່ ຈະກັກລົດທີ່ບໍ່ມີໃບທະບຽນໄວ້ ເພື່ອດໍາເນີນຄະດີ ຕາມກົດໝາຍ.

## ມາດຕາ 31. ການຂັບຂີ່ລົດ ໂດຍນໍາໃຊ້ໃບຂັບຂີ່, ເອກະສານລົດທີ່ໝົດກໍານົດຫລືຂັບຂີ່ລົດບໍ່ຖືກປະເພດ

ຜູ້ຂັບຂີ່ຜູ້ໃດຫາກນໍາໃຊ້ໃບຂັບຂີ່ ຫຼືເອກະສານກ່ຽວຂ້ອງກັບລົດ ເຊັ່ນ: ໃບທະບຽນ, ໃບເສຍຄ່າທາງ, ໃບຢັ້ງຢືນການກວດກາເຕັກນິກ, ໃບປະກັນໄພທີ່ກ່ຽວຂ້ອງ, ໃບອະນຸຍາດແລ່ນລົດ ຫຼືໃບອະນຸຍາດນໍາໃຊ້ລົດເຮັດວິສາຫະກິດຂົນສົ່ງທີ່ໝົດກໍານົດ ຫຼືເປັນຂອງຜູ້ອື່ນ ຫຼືຂັບຂີ່ລົດບໍ່ຖືກປະເພດທີ່ອະນຸຍາດຈະຖືກປັບໃໝຕາມກໍລະນີ ດັ່ງນີ້:

1. ໃນກໍລະນີທີ່ໃບຂັບຂີ່ ຫຼືເອກະສານລົດໝົດກໍານົດບໍ່ເກີນ 3 ເດືອນ ແລະຂັບຂີ່ລົດບໍ່ຖືກປະເພດ ທີ່ອະນຸຍາດ ຈະຖືກປັບໃໝ ຕາມປະເພດລົດ ດັ່ງນີ້:
   - ລົດຈັກ 10.000 ກີບ;
   - ລົດ 3 ລໍ້ ຕິດເຄື່ອງຈັກ 20.000 ກີບ;
   - ລົດເບົາ: ເກັ່ງ, ກະບະ, ຈິບ, ຕູ້ 30.000 ກີບ;
   - ລົດໂດຍສານ 4 ລໍ້ 40.000 ກີບ;
   - ລົດບັນທຸກ 6 ລໍ້ 50.000 ກີບ;
   - ລົດບັນທຸກ 10 ລໍ້ ຂຶ້ນໄປ, ລົດໂດຍສານ (ລົດບັສ) 70.000 ກີບ.

2. ໃນກໍລະນີທີ່ໃບຂັບຂີ່ ຫຼືເອກະສານລົດໝົດກໍານົດເກີນ 3 ເດືອນຂຶ້ນໄປ ຈະຖືກປັບໃໝຕໍ່ເດືອນທີ່ເກີນ ຕາມປະເພດລົດ ດັ່ງນີ້:
   - ລົດຈັກ ເດືອນລະ 5.000 ກີບ;
   - ລົດ 3 ລໍ້ ຕິດເຄື່ອງຈັກ ເດືອນລະ 10.000 ກີບ;
   - ລົດເບົາ: ເກັ່ງ, ກະບະ, ຈິບ, ຕູ້ ເດືອນລະ 15.000 ກີບ;
   - ລົດໂດຍສານ 4 ລໍ້ ເດືອນລະ 20.000 ກີບ;
   - ລົດບັນທຸກ 6 ລໍ້ ເດືອນລະ 25.000 ກີບ;
   - ລົດບັນທຸກ 10 ລໍ້ ຂຶ້ນໄປ, ລົດໂດຍສານ (ລົດບັສ) ເດືອນລະ 30.000 ກີບ.

   ສໍາລັບຜູ້ທີ່ມີໃບຂັບຂີ່ເກີນໜຶ່ງປະເພດ ຈະຖືກປັບໃໝສະເພາະປະເພດໃບຂັບຂີ່ທີ່ສູງສຸດເທົ່ານັ້ນ.

3. ໃນກໍລະນີທີ່ນໍາໃຊ້ໃບຂັບຂີ່ ຫຼືເອກະສານລົດຂອງຜູ້ອື່ນ ຫຼືປອມແປງ ຈະຖືກປັບໃໝຕໍ່ໃບ ຕາມປະເພດລົດ ດັ່ງນີ້:
   - ລົດຈັກ,ລົດ 3 ລໍ້ ຕິດເຄື່ອງຈັກ ໃບລະ 50.000 ກີບ;
   - ລົດເບົາ: ເກັ່ງ, ກະບະ, ຈິບ, ຕູ້ ໃບລະ 60.000 ກີບ;
   - ລົດໂດຍສານ 4 ລໍ້ ໃບລະ 70.000 ກີບ;
   - ລົດບັນທຸກ 6 ລໍ້ ໃບລະ 80.000 ກີບ;

- ລົດບັນທຸກ 10 ລໍ້ ຂຶ້ນໄປ, ລົດໂດຍສານ (ລົດບັສ) ໃບລະ 100.000 ກີບ.

ນອກຈາກນີ້ ເຈົ້າໜ້າທີ່ຄວບຄຸມການຈະລາຈອນ ຈະກັກລົດທີ່ມີເອກະສານບໍ່ຖືກຕ້ອງ ຫຼືປອມແປງໄວ້ ເພື່ອດຳເນີນຄະດີຕາມກົດໝາຍຕໍ່ໄປ.

### ມາດຕາ 32. ການຂັບຂີ່ລົດບໍ່ຕິດປ້າຍທະບຽນ, ຕິດປ້າຍທະບຽນທີ່ບໍ່ຖືກຕ້ອງ ຫລືໝົດອາຍຸການນຳໃຊ້

ຜູ້ຂັບຂີ່ຜູ້ໃດຫາກບໍ່ຕິດປ້າຍທະບຽນ; ຕິດປ້າຍທະບຽນທີ່ເລີກໃຊ້ແລ້ວ, ປອມແປງ, ມີສະພາບແຕກ, ຫັກ, ຂາດ, ຕົວໜັງສື ຫຼືຕົວເລກລືບ, ບໍ່ແຈ້ງ; ຕິດປ້າຍທະບຽນບໍ່ຖືກບ່ອນ; ຕິດປ້າຍທະບຽນທົດລອງ ຫຼືຊົ່ວຄາວ ທີ່ໝົດອາຍຸການນຳໃຊ້ເກີນ ສາມເດືອນ ຈະຖືກປັບໃໝ ຕາມປະເພດລົດ ດັ່ງນີ້:

- ລົດຈັກ, ລົດ 3 ລໍ້ ຕິດເຄື່ອງຈັກ 10.000 ກີບ;
- ລົດເບົາ: ເກງ, ກະບະ, ຈິບ, ຕູ້ 20.000 ກີບ;
- ລົດໂດຍສານ 4 ລໍ້ 40.000 ກີບ;
- ລົດບັນທຸກ 6 ລໍ້ 50.000 ກີບ;
- ລົດບັນທຸກ 10 ລໍ້ ຂຶ້ນໄປ, ລົດໂດຍສານ (ລົດບັສ) 60.000 ກີບ.

ຜູ້ຂັບຂີ່ລົດຫາກໄດ້ຕິດປ້າຍທະບຽນທີ່ບໍ່ໄດ້ມາດຖານ ຫຼືປ້າຍທີ່ເຮັດເອົາເອງ ຈະຖືກປັບໃໝສອງເທົ່າ ຂອງອັດຕາປັບໃໝ ທີ່ກຳນົດໄວ້ໃນຂ້າງເທິງນີ້.

ລົດຕິດປ້າຍທະບຽນທີ່ປອມແປງ ຈະຖືກກັກໄວ້ ເພື່ອດຳເນີນຄະດີຕາມກົດໝາຍ.

## ໝວດທີ 5
## ອັດຕາປັບໃໝ ສຳລັບການລະເມີດລະບຽບການຂົນສົ່ງ

### ມາດຕາ 33. ການບັນທຸກສິນຄ້າ ຫລືເຄື່ອງຂອງເກີນຂະໜາດ

ລົດຂົນສົ່ງສິນຄ້າທຸກຂະໜາດ ຕ້ອງບັນທຸກສິນຄ້າ ຫຼືເຄື່ອງຂອງຕາມຂະໜາດ, ຄວາມຍາວ, ຄວາມກວ້າງ ແລະຄວາມສູງ ໃຫ້ຖືກຕ້ອງ ຕາມລະບຽບການ ທີ່ກະຊວງຄົມມະນາຄົມ ຂົນສົ່ງ ໄປສະນີ ແລະກໍ່ສ້າງ ວາງອອກ;

ຜູ້ຂັບຂີ່ ຫລືເຈົ້າຂອງລົດ ຫາກໄດ້ບັນທຸກສິນຄ້າ ຫຼືເຄື່ອງຂອງເກີນຂະໜາດ ແລ້ວເຮັດໃຫ້ກີດຂວາງການຈະລາຈອນ ເຊັ່ນ: ຍາວໂພດ, ກວ້າງໂພດ ຫຼືສູງໂພດ ຈະຖືກປັບໃໝ ຕາມປະເພດລົດ ດັ່ງນີ້:

- ລົດຖີບ 10.000 ກີບ;
- ລົດຈັກ 20.000 ກີບ;
- ລົດໄຖນາເດີນຕາມແກ່ລໍ້ 30.000 ກີບ;

- ລົດສາມລໍ້ຕິດເຄື່ອງຈັກ ທຸກປະເພດ 50.000 ກີບ;
- ລົດເບົາທຸກປະເພດ 60.000 ກີບ;
- ລົດຂົນສົ່ງສິນຄ້າ 80.000 ກີບ.

ສ່ວນອັດຕາປັບໃໝ ສຳລັບລົດບັນທຸກທີ່ມີນ້ຳໜັກເກີນ ຈະມີລະບຽບການສະເພາະຕ່າງຫາກ.

## ມາດຕາ 34. ການບັນຈຸຄົນໂດຍສານ ເກີນຈຳນວນ

ລົດຂົນສົ່ງຜູ້ໂດຍສານທຸກຂະໜາດ ຕ້ອງບັນຈຸຄົນໂດຍສານ ຕາມຈຳນວນທີ່ໄດ້ກຳນົດໄວ້ ໃນມາດຕາ 9 ຂອງກົດໝາຍວ່າດ້ວຍການຂົນສົ່ງທາງບົກ, ມາດຕາ 13 ຂອງກົດໝາຍວ່າດ້ວຍການຈະລາຈອນທາງບົກ ແລະຕາມດຳລັດສະບັບນີ້.

ລົດຖີບ ອະນຸຍາດໃຫ້ຂີ່ໄດ້ບໍ່ເກີນສອງຄົນ. ຜູ້ລະເມີດຈະຖືກປັບໃໝຄົນລະ 10.000 ກີບ.

ລົດຈັກ ອະນຸຍາດໃຫ້ຜູ້ໃຫຍ່ຊ້ອນໄດ້ໜຶ່ງຄົນ ແລະ ເດັກນ້ອຍອີກໜຶ່ງຄົນ ທີ່ມີອາຍຸບໍ່ເກີນ ສິບເອັດປີ. ຜູ້ລະເມີດຈະຖືກປັບໃໝຄົນລະ 20.000 ກີບ.

ຫ້າມລົດສາມລໍ້ຕິດເຄື່ອງຈັກປະເພດຈຳໂບ້ ບັນຈຸຄົນໂດຍສານເກີນ 05 ຄົນ ຫຼືບັນທຸກສິນຄ້າ, ເຄື່ອງຂອງ ເກີນ 300 ກິໂລ. ສຳລັບລົດສາມລໍ້ປະເພດຕຸກໆ ຫ້າມບັນຈຸຄົນໂດຍສານ ເກີນ 09 ຄົນ ຫຼືບັນທຸກເຄື່ອງຂອງ ເກີນ 550 ກິໂລ. ຜູ້ຂັບຂີ່ ຫຼືເຈົ້າຂອງລົດທີ່ລະເມີດ ຈະຖືກປັບໃໝ 30.000 ກີບ ຕໍ່ຄົນໂດຍສານ ໜຶ່ງຄົນ ຫຼືໃນກໍລະນີທີ່ບັນທຸກເກີນນ້ຳໜັກ ຈະຖືກປັບໃໝ 30.000 ກີບ ຕໍ່ຖ້ຽວ.

ລົດເກງ ອະນຸຍາດໃຫ້ບັນຈຸຜູ້ໃຫຍ່ໄດ້ ບໍ່ເກີນ 05 ຄົນ, ເດັກນ້ອຍບໍ່ເກີນ 06 ຄົນ ບໍ່ນັບຄົນຂັບ. ຜູ້ຂັບຂີ່ ຫຼືເຈົ້າຂອງລົດທີ່ລະເມີດ ຈະຖືກປັບໃໝ 30.000 ກີບ ຕໍ່ຄົນ ໜຶ່ງຄົນທີ່ບັນຈຸເກີນ.

ລົດໂດຍສານສອງແຖວ ອະນຸຍາດໃຫ້ບັນຈຸຄົນໂດຍສານບໍ່ເກີນ 14 ຄົນ ແລະ ເຄື່ອງບໍ່ເກີນ 500 ກິໂລ. ຜູ້ຂັບຂີ່ ຫລືເຈົ້າຂອງລົດທີ່ລະເມີດ ຈະຖືກປັບໃໝ 30.000 ກີບ ຕໍ່ຄົນ ໜຶ່ງຄົນທີ່ໂດຍສານເກີນ. ໃນ ກໍລະນີທີ່ເອົາຄົນຂຶ້ນເທິງຫລັງຄາ ຫຼືແຂວນທ້າຍລົດ ຜູ້ຂັບຂີ່ ຫຼືເຈົ້າຂອງລົດທີ່ລະເມີດ ຈະຖືກປັບໃໝເພີ່ມ ອີກ 30.000 ກີບ ຕໍ່ ໜຶ່ງຄົນ.

ລົດກະບະສ່ວນບຸກຄົນທີ່ບໍ່ໄດ້ປະກອບບ່ອນນັ່ງນັ້ນ ອະນຸຍາດໃຫ້ບັນຈຸຄົນ ໄດ້ບໍ່ເກີນ 10 ຄົນ ນັບທັງຄົນຂັບ. ຜູ້ຂັບຂີ່ ຫຼືເຈົ້າຂອງລົດທີ່ລະເມີດ ຈະຖືກປັບໃໝ 30.000 ກີບ ຕໍ່ຄົນ ໜຶ່ງທີ່ບັນຈຸເກີນ.

ລົດໂດຍສານທາງໄກ ອະນຸຍາດໃຫ້ບັນຈຸຜູ້ໂດຍສານ ຕາມຈຳນວນຂອງບ່ອນນັ່ງ ຫຼືຈຳນວນທີ່ໄດ້ກຳນົດໃຫ້ ໃນໃບອະນຸຍາດດຳເນີນທຸລະກິດ. ຫ້າມເອົາຄົນໂດຍສານ ຂຶ້ນນັ່ງເທິງຫລັງຄາລົດ ຫຼືແຂວນທ້າຍລົດ. ຜູ້ຂັບຂີ່ ຫຼືເຈົ້າຂອງລົດທີ່ລະເມີດ ຈະຖືກປັບໃໝ 50.000 ກີບ ຕໍ່ຄົນ ຕໍ່ຄັ້ງ.

ລົດໂດຍສານທີ່ແລ່ນລະຫວ່າງແຂວງ ຫຼືລະຫວ່າງປະເທດ ລວມທັງລົດສອງແຖວທີ່ແລ່ນລະຫວ່າງແຂວງ ອະນຸຍາດໃຫ້ບັນທຸກເຄື່ອງຜູ້ໂດຍສານໃສ່ເທິງຫລັງຄາໄດ້ ແຕ່ຄວາມສູງຂອງເຄື່ອງບໍ່ໃຫ້ເກີນ 60 (ຫົກສິບ) ຊັງຕີແມັດ ນັບແຕ່ຫລັງຄາລົດຂຶ້ນໄປ. ສະເພາະລົດຂົນສົ່ງໂດຍສານຂະໜາດໃຫຍ່ທີ່ມີບ່ອນນັ່ງ 36 ບ່ອນນັ່ງຂຶ້ນໄປ ອະນຸຍາດໃຫ້ມີຄວາມສູງທັງໝົດບໍ່ເກີນ 4,20 ແມັດ (ສີ່ແມັດຊາວຊັງຕີແມັດ) ຈາກໜ້າດິນຂຶ້ນໄປ. ຜູ້ຂັບຂີ່ ຫຼືເຈົ້າຂອງລົດທີ່ລະເມີດ ຈະຖືກປັບໃໝ 50.000 ກີບ ຕໍ່ ໜຶ່ງຄັ້ງ.

### ມາດຕາ 35. ການຄ່ຽນຖ່າຍສິນຄ້າ ຊຶ່ງກີດຂວາງການສັນຈອນ

ລົດບັນທຸກທີ່ມີຂະໜາດບັນທຸກສິນຄ້າແຕ່ ຫ້າ ໂຕນຂຶ້ນໄປ ຕ້ອງບໍ່ໃຫ້ກີດຂວາງການສັນຈອນ ໃນເວລາຂົນສົ່ງສິນຄ້າ ຂຶ້ນ ຫຼືລົງຢູ່ສະຖານທີ່ຕາມແຄມທາງ ແລະເຂດຊຸມຊົນ ເຊັ່ນ: ຮ້ານຄ້າ, ອາຄານ, ສາງເຄື່ອງ, ຮ້ານຄ້າທີ່ຕັ້ງຢູ່ໃນເຂດຕະຫລາດ ແລະເຂດກໍ່ສ້າງທີ່ມີການສັນຈອນໜາແໜ້ນ. ຫ້າມເອົາສິນຄ້າຂຶ້ນລົດ ຫຼືລົງລົດ ຕາມກຳນົດເວລາໃນວັນລັດຖະການ ດັ່ງນີ້:

1. ຕອນເຊົ້າ ແຕ່ 7:00 ໂມງ ເຖິງ 9:00 ໂມງ;
2. ຕອນແລງແຕ່ 16:00 ໂມງ ເຖິງ 17:30 ໂມງ.

ຜູ້ລະເມີດ ຈະຖືກປັບໃໝ ຄັ້ງລະ 200.000 ກີບ. ຖ້າຫາກລະເມີດເກີນ 3 ຄັ້ງ ຈະຖືກຖອນໃບອະນຸຍາດຂັບຂີ່, ໃບອະນຸຍາດດຳເນີນທຸລະກິດ ແລະສັ່ງໃຫ້ປິດຮ້ານ.

## ໝວດທີ 6
## ອັດຕາປັບໃໝ ສຳລັບການລະເມີດລະບຽບການປົກປັກຮັກສາທາງຫລວງ

### ມາດຕາ 36. ການເຄື່ອນຍ້າຍຍານພາຫະນະກົນຈັກໜັກ ທີ່ບໍ່ຖືກຕ້ອງ

ການເຄື່ອນຍ້າຍພາຫະນະກົນຈັກໜັກ ໂດຍສະເພາະລົດຕີນເຫລັກ ຕ້ອງໃຊ້ລົດລາກແກ່ ຫຼືລົດຂົນສົ່ງທີ່ຖືກຕ້ອງຕາມເຕັກນິກເພື່ອບັນທຸກໄປ. ຫ້າມຂັບລົດຕີນເຫລັກທຸກປະເພດແລ່ນໄປເອງຕາມເສັ້ນທາງ ຊຶ່ງຈະເຮັດໃຫ້ເສັ້ນທາງເກີດຄວາມເສັຍຫາຍ. ຜູ້ລະເມີດ ຈະຖືກປັບໃໝ ຕາມປະເພດພາຫະນະ ດັ່ງນີ້:

- ລົດໄຖນາຕີນເຫລັກທຸກປະເພດ 100.000 ກີບ ຕໍ່ ໜຶ່ງຄັ້ງ;
- ຍານພາຫະນະກົນຈັກໜັກຕີນເຫລັກທຸກປະເພດ 200.000 ກີບ ຕໍ່ ໜຶ່ງຄັ້ງ.

ນອກຈາກຈະຖືກປັບໃໝແລ້ວ ຜູ້ຂັບຂີ່, ເຈົ້າຂອງ ຫຼືຜູ້ຄອບຄອງຍານພາຫະນະກົນຈັກ ຍັງຕ້ອງຮັບຜິດຊອບທົດແທນຄ່າສ້ອມແປງຕອນທາງທີ່ຖືກເສັຍຫາຍ ຍ້ອນການລະເມີດດັ່ງກ່າວ ຕາມມູນຄ່າສ້ອມແປງຕົວຈິງ.

### ມາດຕາ 37. ການເຮັດໃຫ້ໂຄງປະກອບ, ສິ່ງປະກອບ ຫລືກິດຈະການປ້ອງກັນຄວາມປອດໄພຂອງທາງເສັຍຫາຍ

ບຸກຄົນຜູ້ໃດຫາກໄດ້ເຮັດໃຫ້ໂຄງປະກອບ, ສິ່ງປະກອບ ຫຼືກິດຈະການປ້ອງກັນຄວາມປອດໄພຂອງທາງເສັຍຫາຍ ເຊັ່ນ: ໜ້າທາງ, ຂົວ, ກຳແພງຕ້ານເຈື່ອນ, ເຄື່ອງໝາຍຈະລາຈອນ, ລະບົບໄຟສັນຍານ, ລະບົບໄຟແສງສະຫວ່າງ, ດອນກາງທາງ, ກິດຈະການປ້ອງກັນ ຄວາມປອດໄພຂອງທາງ ຫຼືສິ່ງອຳນວຍຄວາມສະດວກໃນການຈະລາຈອນອື່ນໆເກີດການເປ່ເພ ຫຼືເສັຍຫາຍ ຈະຖືກປັບໃໝ 200.000 ກີບ ພ້ອມທັງໃຊ້ແທນຄືນຄ່າເສັຍຫາຍທັງໝົດ.

**ມາດຕາ 38. ການສ້າງຄວາມເປິເປື້ອນໃສ່ທາງຫລວງ**

ຜູ້ຂັບຂີ່ ຫຼືເຈົ້າຂອງລົດຫາກໄດ້ບັນທຸກຫີນ, ດິນ ຫຼືຊາຍທີ່ບໍ່ມີການປົກຄຸມຢ່າງດີ, ເຮັດໃຫ້ສິ່ງທີ່ບັນທຸກຕົກເຮ່ຍໃສ່ທາງ ຫຼືແລ່ນເຂົ້າ-ອອກສະຖານທີ່ກໍ່ສ້າງ ຊຶ່ງໄດ້ສ້າງຄວາມເປິເປື້ອນໃສ່ທາງປູຢາງ ຫຼືທາງເບຕົງ ຈະຖືກປັບໃໝ 100.000 ກີບ ຕໍ່ຖ້ຽວ ຕໍ່ໜຶ່ງຄັນ ພ້ອມທັງຮັບຜິດຊອບຄ່າໃຊ້ຈ່າຍ ໃນການທໍາຄວາມສະອາດຕອນທາງ ບ່ອນທີ່ຕົນໄດ້ເຮັດໃຫ້ເປິເປື້ອນນັ້ນ.

ຄົນຍ່າງ, ຜູ້ຂັບຂີ່ ຫຼືເຈົ້າຂອງລົດຂົນສົ່ງໂດຍສານທຸກປະເພດ ຫາກໄດ້ຖິ້ມ ຫຼືປ່ອຍໃຫ້ຄົນໂດຍສານຂອງຕົນ ຖິ້ມຂີ້ເຫຍື້ອ, ຖົງຢາງ, ຖົງນໍ້າ ຫຼື ສິ່ງເສດເຫລືອຕ່າງໆ ລົງພື້ນທາງ ຈະຖືກປັບໃໝ 50.000 ກີບ ຕໍ່ຄົນ.

## ໝວດທີ 7
## ມາດຕະການ ຕໍ່ຜູ້ລະເມີດກົດລະບຽບຈະລາຈອນແລ້ວພາໃຫ້ເກີດອຸປະຕິເຫດ ແລະຜູ້ລະເມີດທີ່ບໍ່ເຂັດຫຼາບ

**ມາດຕາ 39. ມາດຕະການຕໍ່ຜູ້ລະເມີດກົດລະບຽບຈະລາຈອນແລ້ວພາໃຫ້ເກີດອຸປະຕິເຫດ**

ບຸກຄົນຜູ້ໃດຫາກໄດ້ລະເມີດກົດລະບຽບຈະລາຈອນ, ກົດໝາຍຂົນສົ່ງ, ກົດໝາຍທາງຫລວງ, ກົດໝາຍຈະລາຈອນທາງບົກ ແລະລະບຽບການອື່ນໆທີ່ກ່ຽວຂ້ອງກັບຄວາມປອດໄພຕາມທ້ອງຖະໜົນ ແລ້ວພາໃຫ້ເກີດອຸປະຕິເຫດ ຈະໄດ້ຖືກປັບໃໝ 30.000 ກີບ ແລະ/ຫຼືຖືກດໍາເນີນຄະດີຕາມກົດໝາຍ.

ບຸກຄົນຜູ້ໃດຫາກໄດ້ເຮັດໃຫ້ອຸປະຕິເຫດເກີດຂຶ້ນແລ້ວຫຼົບໜີ ຈະຖືກປັບໃໝຕາມປະເພດລົດດັ່ງນີ້:

- ລົດຈັກ, ລົດ 3 ລໍ້ ຕິດເຄື່ອງຈັກ 100.000 ກີບ;
- ລົດ 4 ລໍ້ ຂຶ້ນໄປ 500.000 ກີບ.

ແລະ/ຫຼື ຖືກດໍາເນີນຄະດີ ຕາມກົດໝາຍ.

**ມາດຕາ 40. ມາດຕະການຕໍ່ຜູ້ລະເມີດທີ່ບໍ່ເຂັດຫລາບ**

ຜູ້ຂັບຂີ່ຍານພາຫະນະທຸກປະເພດ ທີ່ເຄີຍໄດ້ລະເມີດມາກ່ອນ ແລ້ວມາລະເມີດເທື່ອໃໝ່ ອີກເປັນຄັ້ງທີສອງ ຊຶ່ງເປັນຄວາມຜິດສະຖານດຽວກັນ ຈະຖືກປັບໃໝ ສາມເທົ່າຕົວຂອງອັດຕາປັບໃໝ ທີ່ໄດ້ກໍານົດໄວ້ໃນດໍາລັດສະບັບນີ້, ພ້ອມທັງກັກໃບຂັບຂີ່ໄວ້ສາມເດືອນ.

ໃນກໍລະນີທີ່ມີການລະເມີດເປັນຄັ້ງທີສາມ ໃນຄວາມຜິດສະຖານດຽວກັນ ຜູ້ລະເມີດຈະຖືກປັບໃໝສາມເທົ່າຕົວຂອງອັດຕາປັບໃໝ ແລະຖືກຍຶດໃບຂັບຂີ່ໄວ້, ພ້ອມທັງບໍ່ອະນຸຍາດໃຫ້ຜູ້ກ່ຽວຂັບຂີ່ເປັນເວລາສອງປີ. ຫລັງຈາກນັ້ນ, ຜູ້ກ່ຽວຈຶ່ງຈະໄດ້ຮັບອະນຸຍາດໃຫ້ສອບເສັງໃບຂັບຂີ່ຄືນໃໝ່.

## ໝວດທີ 8
## ການຄຸ້ມຄອງຍານພາຫະນະ ທີ່ຖືກກັກໄວ້, ເງິນປັບໃໝ ແລະເງິນຄ່າປົກປັກຮັກສາຍານພາຫະນະ

### ມາດຕາ 41. ການຄຸ້ມຄອງຍານພາຫະນະທີ່ຖືກກັກ

ເຈົ້າໜ້າທີ່ຕຳຫຼວດຈະລາຈອນ ມີສິດກັກລົດທຸກປະເພດໄວ້ ໃນກໍລະນີດັ່ງນີ້: ລົດທີ່ເກີດອຸປະຕິເຫດຢ່າງຮ້າຍແຮງ ໃນເມື່ອຄູ່ກໍລະນີບໍ່ສາມາດຕົກລົງກັນໄດ້, ລົດບໍ່ມີທະບຽນ ແລະເອກະສານປອມແປງ. ເຈົ້າໜ້າທີ່ຕ້ອງຮັກສາ ຫລືເກັບມ້ຽນໄວ້ໃນສາງເປັນຢ່າງດີ, ເຈົ້າຂອງລົດທີ່ຖືກກັກ ຕ້ອງໄດ້ເສຍຄ່າປົກປັກຮັກສາ ຫລືຄ່າຝາກສາງເປັນລາຍວັນ ຕາມປະເພດຂອງພາຫະນະຈົນກວ່າຈະແກ້ໄຂຄະດີສຳເລັດ, ດັ່ງນີ້:

| | | |
|---|---|---|
| - ລົດຖີບ, ລົດ 03 ລໍ້ຖີບ, ລໍ້ຍູ້ | ວັນລະ | 2.000 ກີບ; |
| - ລົດຈັກ | ວັນລະ | 3.000 ກີບ; |
| - ລົດໄຖນາເດີນຕາມແກ່ລໍ້ | ວັນລະ | 4.000 ກີບ; |
| - ລົດ 03 ລໍ້ ເຄື່ອງຈັກ | ວັນລະ | 5.000 ກີບ; |
| - ລົດເບົາ: ເກັ່ງ, ກະບະ, ຈິບ, ຕູ້ | ວັນລະ | 6.000 ກີບ; |
| - ລົດບັນທຸກ 06 ລໍ້ | ວັນລະ | 10.000 ກີບ; |
| - ລົດບັນທຸກ 10 ລໍ້ ຂຶ້ນໄປ, ລົດໂດຍສານ ( ລົດບັສ ) | ວັນລະ | 15.000 ກີບ. |

ໃນໄລຍະພວມດຳເນີນຄະດີ ເຈົ້າໜ້າທີ່ຕ້ອງປົກປັກຮັກສາລົດທີ່ຖືກກັກໄວ້ໃຫ້ດີ. ຫ້າມເຈົ້າໜ້າທີ່ເອົາລົດດັ່ງກ່າວໄປນຳໃຊ້. ເຈົ້າໜ້າທີ່ຜູ້ໃດລະເມີດ ຈະຖືກປະຕິບັດວິໄນ ແລະ ຮັບຜິດຊອບຕໍ່ການເສັຍຫາຍຂອງລົດ.

### ມາດຕາ 42. ການຄຸ້ມຄອງເງິນປັບໃໝ ແລະເງິນປົກປັກຮັກສາຍານພາຫະນະ

ເງິນຄ່າປັບໃໝທັງໝົດ ທີ່ເກັບໄດ້ຈາກຜູ້ລະເມີດຕາມດຳລັດສະບັບນີ້ ແມ່ນມອບເຂົ້າງົບປະມານແຫ່ງລັດ, ສ່ວນການນຳໃຊ້ເງິນດັ່ງກ່າວ ເຂົ້າໃນວຽກງານຕ່າງໆ ທີ່ໄດ້ກຳນົດໄວ້ໃນມາດຕາ 43 ໃຫ້ປະຕິບັດຕາມການຕົກລົງຂອງລັດຖະບານ.

### ມາດຕາ 43. ເປົ້າໝາຍການນຳໃຊ້ເງິນ ທີ່ໄດ້ຮັບຈາກການປັບໃໝ

ເງິນຄ່າປັບໃໝທັງໝົດ ຕ້ອງນຳໃຊ້ເຂົ້າໃນວຽກງານດັ່ງນີ້ :

1. ວຽກງານກວດກາຄວາມປອດໄພທາງຖະໜົນ ເປັນປະຈຳ;
2. ວຽກງານໂຄສະນາ ກ່ຽວກັບຄວາມປອດໄພທາງຖະໜົນ;
3. ວຽກງານການພິມເອກະສານຕ່າງໆ ຫຼືສິ່ງພິມອື່ນໆກ່ຽວກັບຄວາມປອດໄພທາງຖະໜົນ;
4. ວຽກງານກອບກູ້ຊີວິດ ໃນເວລາເກີດອຸປະຕິເຫດ;
5. ວຽກງານບໍລິຫານ ແລະການຄຸ້ມຄອງຄວາມປອດໄພທາງຖະໜົນ;

6. ວຽກງານສ້າງຂີດຄວາມສາມາດ ແລະອຸປະກອນຮັບໃຊ້;

7. ວຽກງານອື່ນໆ ທີ່ກ່ຽວຂ້ອງກັບຄວາມປອດໄພທາງຖະໜົນ.

## ໝວດທີ 9
## ບົດບັນຍັດສຸດທ້າຍ

### ມາດຕາ 44. ການຈັດຕັ້ງປະຕິບັດ

ມອບໃຫ້ກະຊວງ ປ້ອງກັນຄວາມສະຫງົບ, ກະຊວງ ຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ, ບັນດາກະຊວງ, ອົງການທຽບເທົ່າກະຊວງ ແລະອົງການປົກຄອງທ້ອງຖິ່ນ ເປັນຜູ້ຈັດຕັ້ງປະຕິບັດ ແລະເຜີຍແຜ່ດຳລັດສະບັບນີ້ ຕາມພາລະບົດບາດ ແລະໜ້າທີ່ຂອງໃຜລາວ.

### ມາດຕາ 45. ຜົນສັກສິດ

ດຳລັດສະບັບນີ້ ມີຜົນສັກສິດ ພາຍຫລັງເກົ້າສິບວັນ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ. ຂໍ້ກຳນົດ, ບົດບັນຍັດໃດທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ**

ບົວສອນ ບຸບຜາວັນ